## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 19 ກຸມພາ 2006 ( 2-19-2006 )

---

## <u>ການຈັດການກັບຄວາມສົງສັຍ</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ຢຣມ 20:1-13

**<u>ຄວາມຈິງໃນພຣະຄັມພີ:</u>** ພຣະເຈົ້າເຮັດໃຫ້ຄົນທີ່ເຊື່ອມີພະລັງແຂງແຮງຂຶ້ນໃນເວລາທີ່ເຂົາມີຄວາມອ່ອນແອແລະມີຄວາມສົງສັຍ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ແມ່ນເພື່ອຊ່ອຍທ່ານໃຫ້ເຕີບໃຫຍ່ຂຶ້ນໃນການຮັບໃຊ້ພຣະເຈົ້າຢ່າງສັດຊື່ດ້ວຍ:

- ຮູ້ຈັກວ່າຄວາມສົງສັຍ ແລະຄວາມອ່ອນເພັຽທີ່ເປັນສິ່ງທີ່ຄົນທີ່ເຊື່ອທັງຫລາຍໄດ້ປະສົບກັບມັນເລື້ອຍໆ; ແລະ
- ຈົ່ງຍອມວາງໃຈພຣະເຈົ້າໃນຂະນະທີ່ຜ່ານຜ່າກັບຄວາມສົງສັຍຂອງທ່ານ.

### <u>ຂ້າພະເຈົ້າຈະເຮັດຢ່າງໃດເມື່ອການຮັບໃຊ້ພຣະເຈົ້າຂອງຂ້າພະເຈົ້າ ຫາກປົກຄຸມໄປດ້ວຍຄວາມສົງສັຍ?</u>

ບຸກຄົນທີ່ຍິ່ງໃຫຍ່ບາງຄົນໃນພຣະຄັມພີກໍໄດ້ພົບກັບເວລາແຫ່ງການສົງສັຍ. ພາບຂອງບັນພະບຸຣຸດຄົນນຶ່ງຄືໂຢບ, ເພິ່ນໄດ້ສູນເສັຽຊັບສົມບັດ, ຄອບຄົວ, ພ້ອມທັງສຸຂະພາບຂອງເພິ່ນ, ເພິ່ນໄດ້ຮ້ອງທຸກອອກມາວ່າ, "ຈົ່ງສາບແຊ່ງຄ່ຳຄືນນີ້ຂ້ານ້ອຍມາເກີດ" ( ຢບ 3:3 ). ໂຢຮັນບັບຕິສໂຕຜູ້ທີ່ໄດ້ບັບຕິສມາໃຫ້ແກ່ພຣະເຢຊູ, ເມື່ອນຶ່ງປີ ຫລືວ່າປີກວ່າງກໍໄດ້ໃຊ້ສິດໄປຮຽນຖາມພຣະເຢຊູວ່າ, "ທ່ານເປັນຜູ້ທີ່ຈະມານັ້ນຫລື ຫລືຈະຕ້ອງຄອງຖ້າຜູ້ອື່ນ." ( ມທ 11:3 ).

ຖ້າຫາກວ່າຜູ້ປະກາດພຣະທັມຜູ້ຍິ່ງໃຫຍ່ຂອງພຣະເຈົ້າໄດ້ປະສົບກັບເວລາແຫ່ງການສົງສັຍດັ່ງນັ້ນ, ມັນກໍບໍ່ເປັນການແປກປລາດອັນໃດເມື່ອພວກເຮົາຫາກໄດ້ປະສົບການຢ່າງດຽວກັນ? ໃນຕົວຢ່າງແຕ່ລະອັນຜູ້ທີ່ສົງສັຍໄດ້ຮັບຄຳເວົ້າທີ່ໃຫ້ກຳລັງໃຈຊຶ່ງສາມາດເຮັດໃຫ້ເຂົາເຈົ້າເອົາຊະນະກັບຄວາມສົງສັຍໄດ້. ເຮົາສາມາດຈະຊື່ສັດກັບພຣະເຈົ້າດ້ວຍການເປັນຫ່ວງເປັນໃຍກັບຄວາມສົງສັຍຂອງເຮົາໄດ້. ພຣະອົງບໍ່ຊົງຖືຊາເຮົາ. ໃນຂະນະດຽວກັນເຮົາກໍຄວນຈະເປີດອົກເພື່ອຫລັກຖານແລະປະສົບການທີ່ຈະສາມາດຍົກເອົາຄວາມສົງສັຍຂອງເຮົາອອກໄປ.ສິ່ງເຫລົ່ານີ້ກໍໄດ້ເກີດຂຶ້ນກັບເຢເຣມີຢາເຫມືອນກັນຊຶ່ງເຮົາຈະໄດ້ຮູ້ນຳກັນໃນບົດຮຽນວັນນີ້.

### <u>ສຶກສາພຣະຄັມພີ</u>

### 1. <u>ຈົ່ງເວົ້າຄວາມຈິງຂອງພຣະເຈົ້າ</u> ( ຢຣມ 20:1-6 )

ໂດຍອີງໃສ່ພື້ນຖານເຣື່ອງຂອງຜູ້ປະກາດພຣະທັມທີ່ໄດ້ພົບໃນບົດກ່ອນນັ້ນ, ໃນຂໍ້ພຣະທັມທັງຫລາຍໃນບົດທີ 20 ໄດ້ບັນທຶກເຣື່ອງທັງຫລາຍຈາກພຣະເຈົ້າດັ່ງນີ້. ເຣື່ອງໃນບົດທີ 19 ແມ່ນປະຊາຊົນໄດ້ປະຖິ້ມພຣະເຈົ້າແລະໄດ້ກັບກັບຄືນໄປຫາພຣະຂອງຄົນຕ່າງຊາດ. ໃນເຣື່ອງນີ້ ພຣະເຈົ້າໄດ້ເຮັດໃຫ້ຊາວຢູດາແລະຊາວເຢຣູຊາເລັມຢ້ານກົວຈາກການຍຶດຄອງຈາກສັຕຣູຈຳນວນຫລວງຫລາຍທີ່ຈະທຳລາຍເມືອງພ້ອມດ້ວຍປະຊາຊົນທັງຫມົດ. ໂຕເຟັດຊຶ່ງຕັ້ງຢູ່ໃນຮ່ອມພູຮິນນອມພາກໃຕ້ທິດຕາວັນອອກສ່ຽງໃຕ້ຂອງເມືອງນັ້ນ ເປັນບ່ອນທີ່ເຢເຣມີຢາເທສນາ.

ຜູ້ປະກາດພຣະທັມໄດ້ໄປວິຫານໃນກຸງເຢຣູຊາເລັມແລະໄດ້ເທສນາບົດເທດເກົ່າໃຫ້ຄົນທັງຫລາຍຟັງລວມທັງປັດຊູ ( 19:14-15 ). ປັດຊູເປັນລູກຂອງອິມເມເປັນຫົວຫນ້ານັ້ນ ມີຫນ້າທີ່ເພື່ອຮັກສາຄວາມເປັນຣະບຽບໃນພຣະວິ

ທານ.  ລາວຮູ້ສຶກວ່າໜ້າທີ່ຮັບຜິດຊອບຂອງລາວຕ້ອງໄດ້ປະທະກັບເຢເຣມີຢາໃນເຣື່ອງຄຳເທສນາທີ່ເວົ້າເຖິງການທຳລາຍກຸງເຢຣູຊາເລັມທີ່ຈະມາເຖິງນັ້ນ. ລາວໄດ້ທຸບຕີເຢເຣມີຢາແລະໄດ້ຂັງແລະໄດ້ລ່າມໂສ້ໄວ້ໃນຫ້ອງຂັງເພື່ອເປັນການທຳໂທດ. ຫ້ອງຂັງແມ່ນເຄື່ອງມືສຳລັບທໍຣະມານໃນນັ້ນຄົນໂທດໄດ້ຖືກບັງຄັບໃຫ້ນອນຂົດຢູ່ຢ່າງຄັບໆ. ຄົນໂທດໄດ້ຖືກຂັງໄວ້ທີ່ນັ້ນດ້ວຍລະຍະຍາວຈົນຕລອດຄືນ ແລະໄດ້ຖືກຫົວລໍ້ທັງໄດ້ຖືກກະທຳຕໍ່ຢ່າງທາຣຸນ.  ຫ້ອງຂັງນັ້ນມັກຈະພົບໄດ້ນະທີ່ສະຖານທີ່ຊຸມນຸມຊົນ ເຊັ່ນໃນທີ່ນີ້ຄືທີ່ປະຕູເບັນຢາມິນໃນພຣະວິຫານຂອງພຣະເຈົ້າ.

ມື້ເຊົ້າຕໍ່ມາ ປັດຊູ ໄດ້ປ່ອຍເຢເຣມີຢາຈາກຫ້ອງຂັງ. ໃນທັນໃດທີ່ຜູ້ປະກາດພຣະທັມໄດ້ຮັບອິສຣະເພິ່ນໄດ້ເທສນາບົດເຣື່ອງໃຫມ່ແກ່ເຈົ້າໜ້າທີ່ຜູ້ໃຫຍ່. ຊື່ທີ່ວ່າ ປັດຊູ ມີຄວາມໝາຍວ່າ, " ລູກຂອງພຣະເຈົ້າໂຫຣຸ " ( ເປັນຊື່ຂອງພຣະເຈົ້າຕ່າງຊາດຊາວເອຢິບ, ໄດ້ປ່ຽນເປັນ " ມະກໍມິສຊາບີບ " ຊຶ່ງແປວ່າ " ຕົກໃຈຢ້ານກົວໃນທົ່ວທຸກບ່ອນ." ນາມໃຫມ່ນີ້ສະແດງໃຫ້ເຫັນເຖິງຊາຕາກັມຂອງປັດຊູ. ຊື່ຂອງປັດຊູຈະເປັນປາກົດການທັງຕໍ່ຕົນເອງ ແລະຕໍ່ຄົນອື່ນຄືກຳນົດເຄາະກັມທີ່ໄດ້ພະຍາກອນໂດຍເຢເຣມີຢາຈະໄດ້ເປັນຈິງ.  ຢູດາຈະໄດ້ປະສົບກັບຄວາມຢ້ານກົວຈາກການປຸ້ນສະດົມແລະການຂ້າຟັນຈາກກະສັດບາບີໂລນແລະກອງທັບຂອງພຣະອົງ.  ນີ້ເປັນຄັ້ງແຣກໃນປຶ້ມພຣະທັມຂອງເພິ່ນ, ເຢເຣມີຢາໄດ້ບອກວ່າບາບີໂລນຈະເປັນບ່ອນທີ່ພວກຢູດາຈະຖືກເນຣະເທດໄປ.  ແຕ່ໂຊກບໍ່ດີສຳລັບຜູ້ປະກາດພຣະທັມ, ເພິ່ນໄດ້ມີຊີວິດຢູ່ຈົນເຖິງມື້ທີ່ເພິ່ນໄດ້ທຳນາຍໄວ້ແລ້ວນັ້ນໄດ້ເກີດຂຶ້ນເປັນຈິງ.  ໃນປີ 587 ກ່ອນ ຄ.ສ. ກຸງເຢຣູຊາເລັມໄດ້ຖືກເຜົາຜານ ແລະພຣະວິຫານໄດ້ຖືກທຳລາຍລົງຈາກພວກບາບີໂລນ. ຄົນຢູດາຍຈຳນວນຫລວງຫລາຍໄດ້ຖືກເນຣະເທດໄປຢູ່ບາບີໂລນ ( ຢຣມ 52:1-30 ). ການພະຍາກອນຢ່າງແມ່ນຢຳຂອງເຢເຣມີຢາໄດ້ມີໃຫ້ເບິ່ງໃນ ຢຣມ 20:5 ໃນນັ້ນເພິ່ນໄດ້ໃຫ້ເຫັນພາບປະກອບອັນລະອຽດວ່າພວກບາບີໂລນໄດ້ເອົາຫຽັງໄປແດ່.  ສິ່ງທັງຫລາຍທີ່ມີລາຄາໄດ້ຖືກຍຶດໄປຈົນໝົດກ້ຽງ.

ການເທສນາໃສ່ສະເພາະຕົວຕໍ່ປັດຊູ ລູກຊາຍຂອງອິມເມ ( ບໍ່ແມ່ນ ປັດຊູທີ່ໄດ້ເວົ້າໃນ ຢຣມ 21:1 ) ໄດ້ເວົ້າວ່າເພິ່ນ ແລະຄອບຄົວຂອງເພິ່ນຈະໄດ້ຖືກຈັບຕ້ອນໄປດັ່ງນັກໂທດສົງຄາມສູ່ບາບີໂລນ. ພວກເຂົາຈະໄດ້ໄປຕາຍນະທີ່ນັ້ນ. ບາງຄົນທີ່ໄດ້ຖືກຈັບກຸມໄປໃນປີ 587 ກ່ອນ ຄ.ສ. ນັ້ນກໍໄດ້ກັບມາຍັງຢູດາ. ການເປັນເຊັ່ນນີ້ບໍ່ແມ່ນຊາຕາຊີວິດຂອງປັດຊູແລະຄອບຄົວຂອງລາວ. ເຫດຜົນທີ່ເຢເຣມີຢາໃຫ້ການລົງໂທດຕໍ່ປັດຊູນັ້ນແມ່ນການທີ່ເພິ່ນໄດ້ພະຍາກອນທີ່ຜິດພາດ. ມັນໄດ້ໃຫ້ຄວາມຮູ້ສຶກມີຄວາມປອດພັຍຢ່າງຜິດ, ເຢເຣມີຢາໄດ້ເວົ້າສິ່ງທີ່ຖືກຕ້ອງ,  ຄືຄວາມຄິດທີ່ເຈັບປວດທີ່ມີຕໍ່ຄົນທີ່ໄດ້ຟັງ. ພຣະເຈົ້າໄດ້ເອີ້ນເອົາຄົນທີ່ເຊື່ອທຸກຄົນໃຫ້ເວົ້າຄຳເວົ້າຂອງພຣະອົງບໍ່ວ່າຈະມີຜົນຕິດຕາມມາຢ່າງໃດກໍຕາມ.

**2. <u>ຈົ່ງຊື່ສັດໃນໃນຄວາມສົງສັຍຂອງທ່ານ</u>** ( ຢຣມ 20:7-10 )

ເຢເຣມີຢາບໍ່ໄດ້ຮັບສິ່ງໃດນອກຈາກການຫົວຂວັນ, ການຂົ່ມຂູ່, ແລະການຂົ່ມເຫັງດ້ານຮ່າງກາຍເພາະດ້ວຍການເທສນາພຣະຄຳຂອງພຣະເຈົ້າດ້ວຍຄວາມສັດຊື່.  ບໍ່ປລາດຫຽັງເພິ່ນຈຶ່ງໄດ້ເກີດມີຄວາມສົງສັຍ! ເພິ່ນອຸທິດຕໍ່ການຂຽນໃນຕອນສຳຄັນຂອງປຶ້ມພຣະທັມເພື່ອຈະໄດ້ລະບາຍຄວາມຮູ້ສຶກຈາກການຕອບສນອງອັນບໍ່ດີທີ່ເພິ່ນໄດ້ຮັບ ( ຢຣມ 11-20 ). ນັກສຶກສາພຣະຄັມພີໄດ້ກ່າວເຖິງການຂຽນຕອນນີ້ຂອງເພິ່ນວ່າເປັນ " ການສາຣະພາບຂອງເຢເຣມີຢາ ". ຢຣມ 20:7-18 ກໍຍັງໄດ້ບັນຈຸການສາຣະພາບຕອນອື່ນດ້ວຍ.  ການສາຣະພາບເຫລົ່ານີ້ໄດ້ສະແດງໃຫ້ເຫັນເຖິງການດີ້ນຣົນພາຍໃນ  ແລະການດີ້ນຣົນຢ່າງມະນຸດຂອງຜູ້ປະກາດພຣະທັມໃນສມັຍເດີມ ແລະໃນສມັຍຂອງການເກີດວິກິດສ່ວນຕົວ.

ຜູ້ປະກາດພຣະທັມໄດ້ເຣີ່ມຕົ້ນການສາຣະພາບດ້ວຍການຈົ່ມທຸກ ( ຂໍ້ 7-10 ),  ກາຍໄປເປັນການເວົ້າເຖິງການໝັ້ນໃຈໃນການປົກປ້ອງຂອງພຣະເຈົ້າ ( ຂໍ້ 11-12 ), ແລະໄດ້ຈົບລົງໃນຄວາມມີຊັຍຂອງຄວາມຫວັງໃຈ ( ຂໍ້ 13 ). ການຈົ່ມທຸກອັນແຣກແມ່ນ " ພຣະເຈົ້າໄດ້ຫລອກລວງຂ້ອຍ ". ຄຳວ່າ ຫລອກລວງ ມີຄວາມໝາຍວ່າ " ທຳໃຫ້ຕັດສິນໃຈໄດ້ " ແລະບາງທີກໍແມ່ນວ່າເຢເຣມີຢາມີຄວາມຕັ້ງໃຈໄວ້ແລ້ວໃນທີ່ນີ້. ສົມມຸດວ່າອັນນີ້ຫາກເປັນກໍຣະນີນັ້ນ, ເຢເຣມີຢາກໍເປັນຜູ້ກ່າວຫາວ່າພຣະເຈົ້າເປັນຜູ້ທີ່ໃຊ້ອຳນາດເພື່ອຊັກນຳໃຫ້ເພິ່ນທຳຕາມການຮຽກເອີ້ນຄັ້ງທຳອິດ

( ຢຣມ 1:4-10 ). ບັດນີ້ຈຶ່ງເບິ່ງວ່າການຢາກຕອບຂອງເຢເຣມີຢາໄດ້ທຳໃຫ້ເພິ່ນກາຍເປັນຜູ້ເປັນຕາໜ້າຫົວຂວັນແທ້ໆ.

ເຢເຣມີຢາຮູ້ສຶກຖືກຂືນໃຈໃຫ້ເທສນາເຣື່ອງຮຸນແຮງ ແລະການພິນາດຈິບຫາຍ ເພາະວ່າສິ່ງເຫລົ່ານີ້ເປັນສາຍເຫດໃຫ້ເກີດຜົນທີ່ຕິດຕາມມາອັນຫລີກບໍ່ພົ້ນຈົນກວ່າວ່າຊາວຢູດາ ແລະກຸງເຢຣູຊາເລັມຈະໄດ້ຖິ້ມໃຈເກົ່າເອົາໃຈໃໝ່. ການເຮັດວຽກໜັກຂອງພຣະເຈົ້າດ້ວຍຄວາມສັດຊື່, ແຕ່ປານນັ້ນຜູ້ປະກາດພຣະທັມຂອງພຣະເຈົ້າຍັງບໍ່ໄດ້ຮັບການເຫັນຊອບແລະອະພັຍໂທດ; ແທນທີ່ວ່າຈະເປັນຢ່າງນັ້ນ ເພິ່ນພັດໄດ້ຮັບແຕ່ຄວາມອັບອາຍຂາຍໜ້າ ແລະຖືກຫົວລໍ້ເຍາະເຍີ້ຍ. ການອັບອາຍຂາຍໜ້າແມ່ນການໄດ້ຮັບຕຳໜິຢ່າງເຈັບປວດ ແລະແຫລມຄົມທີ່ສຽບແທງໃສ່ຄົນໃດຄົນນຶ່ງ. ຜູ້ປະກາດພຣະທັມໄດ້ໃຊ້ຄຳນີ້ຫລາຍຄັ້ງເພື່ອບັນຍາຍການປະພຶດກະທຳຂອງຄົນທີ່ຕໍ່ສູ້ຕໍ່ເພິ່ນ. ການຫົວລໍ້ເຍາະເຍີ້ຍແມ່ນເນັ້ນໃສ່ການຫົວດູຖູກຢຽດຫຍາມຕໍ່ຄົນອື່ນ. ການຕອບສນອງອັນທຳອິດຂອງເຢເຣມີຢາຕໍ່ການກະທຳດ້ວຍການຕິຕຽນຢ່າງເຈັບປວດ ແລະການກະທຳອັນບໍ່ຖືກຕ້ອງທາງດ້ານຮ່າງກາຍແມ່ນດ້ວຍການຢຸດເຊົາການເທສນາທີ່ເບິ່ງເໝືອນວ່າເປັນເຫດໃຫ້ເກີດການຂົ່ມເຫັງມານັ້ນ. ແທ້ຈິງແລ້ວເພິ່ນພະຍາຍາມທຳຢ່າງນີ້ຫລາຍເທື່ອແລ້ວ ບາງທີກໍອາດເປັນໂອກາດອັນຍາວນານ. ໃນທີ່ສຸດ, ເພິ່ນໄດ້ພົບວ່າການຢູ່ເສີຽນັ້ນບໍ່ແມ່ນທາງເລືອກທີ່ຖືກຕ້ອງເພາະວ່າມັນເປັນພຣະຄຳຂອງພຣະເຈົ້າ ເພາະເຫດນີ້ມັນຈຶ່ງໄດ້ປຽບເໝືອນກັບຖືກໄຟໝົກໄໝ້ຢູ່ໃນໃຈຂອງເພິ່ນ. ເຢເຣມີຢາໄດ້ມີຄວາມດົນໃຈມາຈາກເບື້ອງເທິງໃຫ້ເວົ້າເພື່ອພຣະເຈົ້າເຖິງແມ່ນວ່າຈະນຳເອົາສັດຕຣູໃໝ່ມາໃຫ້ກໍຕາມ. ມັນເປັນສິ່ງທີ່ເບົາແລະງ່າຍສຳລັບເພິ່ນດີກວ່າຈະມິດງຽບຢູ່ແລະຄິດວ່າຕົນມີຄວາມສງົບສັນຕິສຸກ. ເພິ່ນໄດ້ປະສົບກັບຄວາມທຸກພາຍໃນຢ່າງງຽບໆແບບດຽວກັບຄຳທີ່ວ່າ " ຂ້າພະເຈົ້າຈຶ່ງລະງັບມັນໃຫ້ໄດ້ຜົນ." ແຕ່ເຖິງປານນັ້ນການດີ້ນລົນພາຍໃນ ແລະການທໍຣະມານຂອງເພິ່ນກໍບໍ່ໄດ້ນຳພາເອົາຜູ້ປະກາດພຣະທັມໄປເຖິງການບໍ່ຟັງຄວາມການຮຽກເອີ້ນຂອງພຣະເຈົ້າ.

ເຢເຣມີຢາໄດ້ປ່ຽນຈາກຈາກການຮ້ອງທຸກຕໍ່ພຣະເຈົ້າໄປສູ່ການເວົ້າຕໍ່ສູ້ມວນຊົນທີ່ໄດ້ເວົ້າເສັຽຫາຍໃຫ້ເພິ່ນ. ການເວົ້າພື້ນແມ່ນການເວົ້າລັບຫລັງຢ່າງເຈັບແສບ. ຄົນທີ່ຕໍ່ສູ້ເພິ່ນໄດ້ຊອກຫາທຸກໂອກາດທີ່ຈະເອົາເຣື່ອງເພິ່ນຕໍ່ໜ້າພວກຜູ້ປົກຄອງແລະຈະແກ້ແຄ້ນເພິ່ນ. ເຂົາເກັບກຳເອົາຄຳເວົ້າທຸກຄຳຂອງເພິ່ນ ແລະຫວັງຮອດເກັບເອົາການເຮັດແລະການເວົ້າທີ່ເຂົາຈະສາມາດໃຊ້ເປັນຫລັກຖານສຳລັບຕໍ່ສູ້ກັບເພິ່ນ. ເຢເຣມີຢາໄດ້ຢູ່ພາຍໃຕ້ກ້ອງສ່ອງເບິ່ງພະຍາດ: ບາງເທື່ອສິ່ງທີ່ເພິ່ນເຈັບປວດຫລາຍກວ່າສິ່ງອື່ນທີ່ສຸດສຳລັບເພິ່ນກໍແມ່ນການຫັກຫລັງຂອງເພື່ອນເພິ່ນເອງ. ຄຳເວົ້າທີ່ເພິ່ນໄດ້ເວົ້າອອກມາ, " ເພື່ອນທຸກຄົນທີ່ເພິ່ນເຄີຍວາງໃຈໄດ້ແມ່ນໄດ້ແນມເບິ່ງການລົ້ມລົງຂອງເພິ່ນ " ຄຳນີ້ມັນໄດ້ສະແດງໃຫ້ເຫັນເຖິງຄວາມໂສກເສົ້າອັນເລິກເຊິ່ງຂອງເພິ່ນ. ຄຳວ່າການລົ້ມລົງໝາຍເຖິງການລົ້ມລົງຝ່າຍສິນທັມ ແລະທີ່ນີ້ກໍມີຄວາມໝາຍຢ່າງນີ້ແທ້. ໃນທີ່ໃດທີ່ເພິ່ນໄດ້ເວົ້າມາກໍແມ່ນຄົນໃນຢູດາໄດ້ຮ່ວມຫົວກັນຄິດອຸບາຍຕໍ່ຕ້ານເພິ່ນ. "ຈົ່ງພາກັນມາ, ຈົ່ງວາງແຜນການຕໍ່ຕ້ານເຢເຣມີຢາ... ຈົ່ງມາ, ຈົ່ງພາກັນປະນາມມັນ ແລະຈົ່ງຢ່າຕັ້ງໃຈຟັງຄຳເວົ້າຂອງມັນເລີຍ " ( ຢຣມ 18:18 ).

ເຢເຣມີຢາໄດ້ວາງຄວາມຄຽດຮ້າຍທັງໝົດຂອງເພິ່ນລົງໃສ່ພຣະເຈົ້າ ເພາະວ່າເພິ່ນບໍ່ໄດ້ເຫັນສິ່ງທີ່ຕາມມາຈາກການຮັບໃຊ້ນັ້ນດີຈັກຢ່າງເລີຍ. ພຣະເຈົ້າບໍ່ເຄີຍໄດ້ຂ້ຽນຕີຫລືລົງວິນັຍຕໍ່ຜູ້ຮັບໃຊ້ຂອງພຣະອົງສຳລັບການຈົ່ມວ່າຂອງເຂົາເລີຍ. ພຣະເຈົ້າບໍ່ເຄີຍຢ້ານເມື່ອພວກເຮົາໄດ້ສະແດງຄວາມສົງສັຍຂອງພວກເຮົາອອກມາຢ່າງສັດຊື່ເລີຍຕໍ່ໝາກຜົນຂອງງານທີ່ອອກມາຈາກການຮຽກເອີ້ນຂອງພຣະອົງນັ້ນ. ເມື່ອພວກເຮົາຫາກໝົດກຳລັງໃຈເນື່ອງຈາກໝາກຜົນທີ່ຕາມມາ, ຄວາມຄຽດຮ້າຍຈາກການຂາດການຮ່ວມໄມ້ຮ່ວມມືຈາກຄົນອື່ນ, ຫລືວ່າໄດ້ຮັບການເຈັບປວດຈາກການຕຳນິຕິຕຽນຢ່າງໜັກ, ພວກເຮົາສາມາດຮູ້ໄດ້ວ່າພຣະເຈົ້າເຂົ້າໃຈຄວາມເຈັບປວດ ແລະຄວາມຄຽດຮ້າຍຂອງພວກເຮົາ.

### 3. <u>ຈົ່ງຈຳໄວ້ວ່າໃຜເປັນຜູ້ຄວບຄຸມຢູ່</u> ( ຢຣມ 20:11-13 )

ຈາກການໂສກເສົ້າໃຈ ແລະຈົ່ມທຸກ ເຢເຣມີຢາໄດ້ຫັນມາສູ່ຄຳເວົ້າທີ່ໄວ້ວາງໃຈແລະໝັ້ນໃຈ. ຄວາມເລົ້າລົມ

ອັນຍິ່ງໃຫຍ່ແມ່ນການຮູ້ຈັກວ່າພຣະເຈົ້າໄດ້ສະຖິດຢູ່ນຳເພິ່ນ. ບາງທີເຢເຣມີຢາໄດ້ຈຳວ່າການເອີ້ນເພິ່ນເທື່ອທຳອິດຈາກພຣະເຈົ້ານັ້ນ ພຣະອົງສັນຍາວ່າຈະຢູ່ກັບເພິ່ນ ( ຢຣມ 1:8,19 ). ຈຶ່ງໃຫ້ຄົນທີ່ຕໍ່ສູ້ກັບເຢເຣມີຢາຊາບວ່າ ເພາະວ່າພຣະເຈົ້ານັ້ນປຽບເຫມືອນນັກຮົບທີ່ຫນ້າຢ້ານ. ພຣະເຈົ້າຈະຢືນຢູ່ຢ່າງຜູ້ຊົງຣິດທານຸພາບຫນ້າເກງຂາມຕໍ່ສູ້ກັບຄົນທັງຫລາຍທີ່ຈະທຳລາຍເຢເຣມີຢາ. ຄົນທີ່ຕໍ່ສູ້ກັບຜູ້ປະກາດພຣະທັມຈະໄດ້ປຣາຊັຍ. ພວກຫວັງຈະທຳໃຫ້ເພິ່ນລົ້ມລົງ ( ຂໍ້ 10 ) ແຕ່ວ່າພວກເຂົາຈະໄດ້ລົ້ມລົງເອງ. ພວກເຂົາຈະໄດ້ຮູ້ກັບຄຳວ່າປຣາຊັຍ, ອັບອາຍຂາຍຫນ້າ, ລົ້ມເຫລວ, ແລະການເສັຽຫນ້າເສັຽຕາ.

ໃນການອະທິຖານອັນສະເພາະເຈາະຈົງທີ່ມີຕໍ່ພຣະເຈົ້າອົງຊົງຣິດຍິ່ງໃຫຍ່ນັ້ນ ເຢເຣມີຢາໄດ້ຂໍການແກ້ແຄ້ນ. ພຣະເຈົ້າອົງຊົງຣິດຍິ່ງໃຫຍ່ເປັນພຣະນາມທີ່ເຢເຣມີຢາມັກຫລາຍສຳລັບຮ້ອງພຣະເຈົ້າ. ຄຳວ່າອົງຊົງຣິດເບິ່ງເຫມືອນວ່າຫມາຍເຖິງອົງຊົງຣິດທີ່ສະເດັດມາຈາກຟ້າສວັນ. ພຣະນາມນີ້ເນັ້ນເຖິງພຣະເຈົ້າແຫ່ງພຣະອຳນາດ. ການແກ້ແຄ້ນທີ່ເຢເຣມີຢາສແວງຫານັ້ນແມ່ນອີງໃສ່ຄວາມປາຖນາຂອງພຣະເຈົ້າສຳລັບຄວາມທ່ຽງທັມ ແລະຄວາມເຂົ້າໃຈທີ່ສຽບແທງເຖິງຫມາກຫົວໃຈ ແລະຈິດໃຈ. ຜູ້ປະກາດພຣະທັມຂອງພຣະເຈົ້າໄດ້ປະຄະດີຂອງເພິ່ນໄວ້ກັບພຣະເຈົ້າ. ດ້ວຍຄວາມຫມັ້ນໃຈວ່າພຣະເຈົ້າຈະຍົກຄວາມຜິດໃຫ້ນັ້ນ, ເພິ່ນໄດ້ສຸມຈິດສຸມໃຈຂອງເພິ່ນເອງ ແລະຄົນອື່ນໃຫ້ຮ້ອງເພງຖວາຍແລະສັຣເສີນພຣະເຈົ້າ. ໃນທີ່ນີ້ຜູ້ປະກາດພຣະທັມຂອງພຣະເຈົ້າໄດ້ເຮັດໃຫ້ຜູ້ຂຽນພຣະທັມບົດເພງສັຣເສີນໃຫ້ຣະເບີດເປັນເພງສັຣເສີນ. ດ້ວຍຄວາມຫມັ້ນໃຈຫລາຍໃນພຣະເຈົ້າເພິ່ນຈຶ່ງໄດ້ສັຣເສີນພຣະເຈົ້າສຳລັບຄວາມໄຖ່ໃຫ້ພົ້ນລ່ວງຫນ້າທີ່ສິ່ງນີ້ຈະໄດ້ມາເຖິງ.

ພວກເຮົາສາມາດດຶງດູດເອົາຄວາມກ້າຫານມາຈາກປະສົບການຂອງເຢເຣມີຢາກັບພຣະເຈົ້າ. ເມື່ອຜູ້ປະກາດພຣະທັມໄດ້ຢູ່ໃນຄວາມຜິດຫວັງຢ່າງເລິກເຊິ່ງ ເພິ່ນໄດ້ຈົດຈຳວ່າພຣະເຈົ້າສະຖິດຢູ່ກັບເພິ່ນ ແລະໄດ້ມີກຳລັງທີ່ມີຊັຍເຫນືອສະພາບການນັ້ນ. ພວກເຮົາສາມາດວາງໃຈໃນພຣະເຈົ້າເມື່ອຄວາມພະຍາຍາມຂອງພວກເຮົາທີ່ຈະຮັບໃຊ້ພຣະເຈົ້າດ້ວຍຄວາມສັດຊື່ຫາກບໍ່ໄດ້ນຳມາຊຶ່ງຜົນທີ່ພວກເຮົາໄດ້ຮັບນັ້ນບໍ່ເປັນທີ່ພວກເຮົາໄດ້ຫວັງເອົາໄວ້.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.com ແປໂດຍ V.S.